# ບົດທີ 9

# ການຮຽນດ້ວຍວິທີວັດຜົນ

ໃນບົດຮຽນນີ້ ເຮົາຈະຮຽນວິທີຮຽນພະຄຳພີໄປອີກຢ່າງໜຶ່ງຄືວິທີວັດຜົນ. ຖ້າທ່ານບໍ່ຮູ້ວິທີຮຽນຢ່າງອື່ນໆ ນັ້ນໃຫ້ກັບໄປຮຽນຄືນອີກ.



**1** ໃນບົດຮຽນທີ 8 ໄດ້ແນະນຳເລື່ອງວິທີຮຽນທີ່ຈະໃຊ້ໃນການແຍກສິ່ງດີແລະສິ່ງບໍ່ດີ ຄືແຍກຄວາມຈິງຈາກຄວາມບໍ່ຈິງ.

ກ. ວິທີຮຽນນັ້ນຄືວິທີໃດ? ______________________________________________

ຂ. ເພື່ອຮຽນດ້ວຍວິທີນັ້ນເຮົາຕ້ອງໃຊ້ສ່ວນໃດ? (ເລືອກ)

______ ຄວາມຄິດ ______ ຈິດໃຈ ______ ກຳລັງ

**2** ເຮົາຈະໃຊ້ວິທີວັດຜົນເພື່ອຈະແຍກ _____________ ຈາກ ______________. (ຕື່ມຄວາມ)

**3** ເຮົາໄດ້ສຶກສາເລື່ອງວິທີຮຽນ 5 ຢ່າງມາແລ້ວ ຮຽນເທື່ອລະຢ່າງ. (ວິທີຮຽນດ້ວຍປຽບທຽບເປັນສ່ວນໜຶ່ງໃນວິທີສັງເກດ ດັ່ງນັ້ນເຮົາບໍ່ໄດ້ນັບ) ວິທີວັດຜົນນີ້ເປັນວິທີທີ 6 ແລະເປັນວິທີ ສຸດທ້າຍທີ່ເຮົາຈະຮຽນ. ໃຫ້ເຮົາພາກັນຮຽນຄືນດ້ວຍການເບິ່ງຮູບ 6 ໃບຢູ່ໜ້າປົກບົດຮຽນນີ້. ຮູບແຕ່ລະໃບນັ້ນສະ ແດງເຖິງການຮຽນວິທີໃດ? (ໃຫ້ຈັບຄູ່ກັນ)

1. ______ ວິທີສັງເກດ
2. ______ ວິທີຕີຄວາມໝາຍ
3. ______ ວິທີນຳມາໃຊ້
4. ______ ວິທີແຍກສ່ວນ
5. ______ ວິທີປະກອບສ່ວນເຂົ້າກັນ
6. ______ ວິທີວັດຜົນ

**4** ການວັດຜົນມີຄວາມໝາຍຄ້າຍຄືກັນກັບການຕີລາຄາກໍວ່າໄດ້. ຄຳເວົ້າໃດຕໍ່ໄປນີ້ ມີສ່ວນໃນການວັດຜົນ (ເລືອກ)

ກ. "ເຫັນຈີ່ຈັ່ງມນັ້ນບໍ່?"

ຂ. "ຂ້ອຍບໍ່ມັກຈີ່ຈັ່ງມຈັກໜ້ອຍ"

ຄ. "ຈີ່ຈັ່ງມຕົວນັ້ນປ່ຽນສີແລ້ວ"

ງ. "ຈີ່ຈັ່ງມຕົວນັ້ນດີຫຼາຍເພາະມັນກິນຍູງ"

**5** ມີບາງຢ່າງທີ່ວັດຜົນມັນໄດ້ງ່າຍ ມີຫຼາຍຢ່າງທີ່ເຮົາຮູ້ແນ່ນອນວ່າມັນດີຫຼືບໍ່ດີ. ຍາກແຕ່ເວລາເຮົາຈະປະເມີນຜົນສິ່ງທີ່ ສວມໜ້າກາກຢ່າງໃດຢ່າງໜຶ່ງທີ່ເຮົາອາດຈະບໍ່ຮູ້ວ່າຈະຖືກຫຼືບໍ່.

ກ. ທ່ານຈື່ເລື່ອງນັກທຳແລະພວກຟາລີຊາຍ ທີ່ຈິງເຂົາກົ້ນກິນຄອບຄົວແມ່ໝ້າຍ ແຕ່ເຂົາເຮັດຫຍັງເພື່ອບັງການນັ້ນໄວ້?____________________________________________

ຂ. ພະເຢຊູມີປັນຍາຮູ້ເລື່ອງຈິງຂອງເຂົາດ້ວຍວິທີໃດ? _________________________

**6** ຖ້າມີສິ່ງໜຶ່ງສິ່ງໃດທີ່ສວມໜ້າກາກດີ ການວັດຜົນວ່າດີຫຼືບໍ່ດີເປັນການຍາກແທ້. ຕັ້ງແຕ່ມະນຸດໄດ້ຕົກຄວາມບາບ ມາຄວາມຄິດຂອງມະນຸດທົ່ວໄປນັ້ນຄິດ ________ ແລະ _______ມົວໄປ.

**7** ຜູ້ປະກາດພະທຳ ເອຊາຢາ ບັນລະຍາຍຄວາມຄິດຂອງຄົນທີ່ມືດມົວດ້ວຍຄວາມບາບຢ່າງນັ້ນວ່າ ເຂົາຖືການຮ້າຍ ວ່າເປັນການດີແລະການດີເປັນການຮ້າຍ. ເຂົາກໍໃຊ້ມືດຕ່າງແຈ້ງແລະແຈ້ງຕ່າງມືດ, ໃຊ້ເຄື່ອງສົ້ມຕ່າງຫວານແລະເຄື່ອງຫວານຕ່າງເຄື່ອງສົ້ມ. (ເອຊາຢາ 5:20)

ກ. ດັ່ງນັ້ນໃນຕົວມະນຸດເຮົາເອງບໍ່ມີປັນຍາທີ່ຈະແຍກລະຫວ່າງສິ່ງ ______ ແລະ ___ . (ຕື່ມ)

ຂ. ເພາະຄວາມບາບເຮັດໃຫ້ຄວາມຄິດຂອງມະນຸດ ___________ ແລະ ___________ ໄປ.

**8** ຄົນເຮົາຖືກຫຼອກລວງໄດ້ງ່າຍຫຼາຍ ຕາຂອງເຮົາກໍອາດຈະຫຼອກລວງໄດ້. ໃນຮູບຂ້າງລຸ່ມນີ້ ຂີດລະຫວ່າງອັກສອນ "ກ" ແລະ "ຂ" ຊື່ ຫຼື ໂຄ້ງ? (ບໍ່ຕ້ອງຂຽນຄຳຕອບ)




*ແຕ່ທັວທີເບິ່ງຄືໂຄ້ງແຕ່ວ່າຖ້າເຮົາຈະເອົາໄມ້ບັນທັດມາລອງເບິ່ງແລ້ວເສັ້ນນັ້ນຊື່, ແມ່ນແຕ່ສິ່ງແວດລ້ອມລວງຕາຢ່າງບໍ່ຈິງ. ເທື່ອໃດທີ່ເຮົາຈະໃຊ້ໄມ້ບັນທັດມາເປັນມາດຕະຖານເຮົາແຍກໄດ້ດີລະຫວ່າງສິ່ງທີ່ຊື່ແລະສິ່ງທີ່ໂຄ້ງ.*

ເຊັ່ນດຽວກັນກັບສິ່ງແວດລ້ອມໃນຊີວິດຂອງເຮົາກໍອາດຈະຫຼອກລວງເຮົາວ່າ ສິ່ງດີຈະຊົ່ວແລະສິ່ງຊົ່ວຈະດີ. ມາດຕະຖານຕາຍຕົວເລື່ອງສິນທຳຄືຫຍັງ? ________________________

**9** ທີ່ຈິງເສັ້ນຂີດນັ້ນຊື່ ແຕ່ເບິ່ງຄືໂຄ້ງເພາະສິ່ງໃດ? ______________________________

**10** ທ່ານເຮັດຢ່າງໃດຈິ່ງຈະຮູ້ວ່າເສັ້ນນັ້ນຊື່ ຫຼືໂຄ້ງ? ______________________________

**11** ເຊັ່ນດຽວກັນກັບດ້ານວິນຍານ ເນື່ອງຈາກຄວາມຄິດຂອງມະນຸດເຮົາຄິດໂກງແລະມືດມົວໄປຍ້ອນຄວາມບາບ, ເຮົາຈຳ ເປັນຕ້ອງມີມາດຕະຖານທີ່ສາມາດວັດແທກການດີແລະຊົ່ວໄດ້. ມາດຕະຖານນັ້ນຈະສາມາດແຍກລະຫວ່າງຄວາມດີແລະຄວາມຊົ່ວ ຄວາມຈິງແລະຄວາມຕົວະ ຄວາມຖືກແລະຄວາມຜິດມາດຕະຖານຕໍ່ໄປນີ້ຈະວັດແທກໄດ້ດັ່ງຕໍ່ໄປນີ້. (ໃຫ້ຈັບຄູ່ກັນ)

| | |
|---|---|
| ກ. ______ ອີງສາ | 1. ເວລາ |
| ຂ. ______ ແມດ | 2. ອຸນຫະພູມ |
| ຄ. ______ ລິດ | 3. ໄລຍະທາງ |
| ງ. ______ ນາທີ | 4. ນ້ຳ |

**12** ໃນຄຳຖາມ 11 ລາຍຊື່ຂ້າງຊ້າຍນັ້ນອີງອາໄສຫຍັງ? (ເລືອກ)

ກ. ການວັດແທກຂອງບຸກຄົນ. ຂ. ການວັດຜົນຂອງກຳມະການ.

ຄ. ມາດຕະຖານຕາຍຕົວ.

**13** ໃຫ້ອ່ານ ພສສ 119:105. ຖ້າເຮົາຈະວັດຜົນໃນຊີວິດ ເຮົາຈະໃຊ້ພະຄຳພີມາເປັນເໝືອນສິ່ງໃດສ່ອງແສງນຳໜ້າໄປ? ______________________________________________

**14** ຖ້າເຮົາຈະວັດຜົນຢ່າງຖືກຕ້ອງ ເຮົາຕ້ອງມີມາດຕະຖານຢ່າງແນ່ນອນ. ມາດຕະຖານວັດຜົນຊີວິດຄຼິດສະຕຽນມີຫຍັງ? ______________________________________________

**15** ພະຄຳພີເປັນພະຄຳຂອງພະເຈົ້າ ແລ້ວເປັນມາດຕະຖານຢ່າງແນ່ນອນເພື່ອວັດຜົນຄວາມເຊື່ອຖືແລະການປະຕິບັດ ດ້ວຍ. ໃນຫຼັກສູດນັດທາຍເຫຼັ້ມທີ 1 ເຮົາໄດ້ຮຽນຮູ້ວ່າພະເຢຊູເກີດຈາກຍິງພົມມະຈະລີ. (ໃຫ້ກັບໄປອ່ານ ມທ 1:18-25 ອີກ)

ກ. ຂໍ້ໃດບອກຄັກແນ່ວ່າ ໂຢເຊັບບໍ່ເປັນບິດາຂອງພະເຢຊູ? ______________________

ຂ. ໂຢເຊັບຮູ້ຕົວວ່າ ບໍ່ເປັນບິດາຂອງເດັກທີ່ຈະເກີດນັ້ນ ເພິ່ນຈຶ່ງຕັດສິນໃຈວ່າຈະເຮັດຫຍັງ?

______________________________________________________________

**16** ກ. ສອງຂໍ້ໃດບອກວ່າມາລີອາມີທ້ອງດ້ວຍລິດເດດພະວິນຍານບໍລິສຸດ? ______________

ຂ. ຂໍ້ໃດບອກວ່າພະອົງເກີດຈາກຍິງພົມມະຈະລີ? ______________________________

**17** ພະຄຳພີສອນຢ່າງແນ່ນອນວ່າ ພະເຢຊູເກີດຈາກຍິງພົມມະຈະລີດ້ວຍລິດເດດຂອງພະວິນຍານບໍລິສຸດ. ພະຄຳພີນັ້ນແຫຼະເປັນມາດຕະຖານທີ່ເຮົາຈະໃຊ້ໃນການວັດຜົນຫຼັກຄວາມເຊື່ອ.

ກ. ພະຄຳພີສອນວ່າໂຢເຊັບບໍ່ແມ່ນ ____________________ ຂອງພະເຢຊູ. (ຕື່ມຄວາມ)

ຂ. ມີແຕ່ພະເຈົ້າເປັນພະບິດາຂອງພະເຢຊູ ເພາະພະເຢຊູເກີດຈາກຍິງ _______________ ດ້ວຍລິດເດດຂອງ ___________________________________ . (ຕື່ມຄວາມຂາດ)

**18** ກ. ຖ້າມີນັກສາດສະໜາຄົນໃດສອນວ່າ ບໍ່ຈຳເປັນທີ່ຈະຖືວ່າພະເຢຊູເກີດຈາກຍິງພົມມະຈະລີ. ຄົນນັ້ນໃຊ້ພະຄຳພີເປັນມາດຕະຖານບໍ່? ______________________________

ຂ. ເທື່ອໃດທີ່ຄວາມຄິດຂອງມະນຸດ ບໍ່ເຂົ້າກັບຄຳສອນໃນພະຄຳພີເຮົາຈະເອົາອັນໃດເປັນມາດຕະຖານ? ______________________________________________________

**19** "ຫຼັກຄວາມເຊື່ອຕາມເຫຼົ່າອັກຄະສາວົກ" ໃນໜັງສືບົດເພງຄຼິດສະຕຽນ ກ່າວດັ່ງຕໍ່ໄປນີ້:

*ພະອົງປະຕິສົນທິເປັນມະນຸດໂດຍທາງວິນຍານບໍລິສຸດຊົງປະສູດຈາກ ນາງມາລີອາຍິງພົມມະຈະລີ.*

ກ. ຄຳນັ້ນຖືກກັບພະຄຳພີບໍ່? ____________________________________________

ຂ. ແມ່ນອັນໃດເປັນມາດຕະຖານ? (ເລືອກ)

______ ພະຄຳພີ ______ ຫຼັກຄວາມເຊື່ອຕາມເຫຼົ່າອັກຄະສາວົກ

**20** ຖ້າມີສາດສະດາຈານທີ່ເວົ້າຄວາມທີ່ຜິດກັບພະຄຳພີເຮົາຄວນຕອບວ່າຢ່າງໃດ? ________

______________________________________________________________

**21** ການທີ່ຈະຮຽນຮູ້ຄວາມຈິງຈາກພະຄຳພີສຳຄັນແທ້ ເພື່ອຈະຮູ້ວັດຜົນຢ່າງອື່ນໆ. ຈົ່ງເອົາແຕ່ພະຄຳພີຢ່າງດຽວມາໃຊ້ ເປັນມາດຕະຖານເພື່ອຈະວັດຜົນໃນເລື່ອງຫຼັກຄວາມເຊື່ອແລະການປະຕິບັດ ແຕ່ມີບາງຢ່າງທີ່ພະຄຳພີບໍ່ໄດ້ເວົ້າ. ໃນແຕ່ລະຂໍ້ຕໍ່ໄປນີ້ພະຄຳພີເວົ້າເລື່ອງອັນໃດ? (ເລືອກ)

ກ. ______ ພະກຳເນີດຈາກຍິງພົມມະຈາລີ
ຂ. ______ ພືກສາຊາດ
ຄ. ______ ຕີເອກອະນຸພາບ
ງ. ______ ລັກສະນະຂອງພະເຢຊູ
ຈ. ______ ພາສາຝະລັ່ງເສດ
ສ. ______ ໄວຍາກອນລາວ

**22** ພະຄຳພີເວົ້າເຖິງພະເຈົ້າຢູ່ແຕ່ມີຫຼາຍຢ່າງທີ່ພະຄຳພີບໍ່ໄດ້ບອກ. ທີ່ຈະໃຊ້ພະຄຳພີມາວັດແທກເລື່ອງຫຼັກຄວາມ ເຊື່ອແລະເລື່ອງການປະຕິບັດຊີວິດຄຼິດສະຕຽນ. ເຮົາຈະໃຊ້ພະຄຳພີໃນການວັດຜົນເລື່ອງພະກຳເນີດຂອງພະເຢຊູ ໄດ້ແຕ່ໃຊ້ບໍ່ໄດ້ໃນການວັດຜົນຊ່າງໄມ້ ຄະນິດສາດ ໆ ລໆ. ໃນແຕ່ລະຂໍ້ຕໍ່ໄປນີ້ໃຫ້ທ່ານເລືອກເອົາແຕ່ສິ່ງທີ່ເຮົາໃຊ້ພະຄຳພີວັດຜົນໄດ້.

ກ. ______ ການຮັບສິນ.
ຂ. ______ ການແຕ່ງງານ.
ຄ. ______ ການເຮັດສວນຜັກ.
ງ. ______ ຊີວະວິທະຍາ.
ຈ. ______ ຫຼັກເຊື່ອຖືວ່າພະເຢຊູເປັນພະເຈົ້າ.
ສ. ______ ວິຊາຟີຊິກ.

**23** ຖ້າພະຄຳພີບໍ່ສອນເລື່ອງວິຊາຊີບຫຼາຍປະການ ເຮົາຈະຫາມາດຕະຖານໃນເລື່ອງນັ້ນຢ່າງໃດໄດ້. (ເລືອກ)

ກ. ______ ອາໄສຄວາມຄິດຂອງຕົນເອງໃນເລື່ອງນັ້ນ.
ຂ. ______ ຍິ່ງສຶກສາພະຄຳພີ ຫວັງວ່າຈະພົບມາດຕະຖານເຫຼົ່ານັ້ນໄດ້.
ຄ. ______ ຮຽນຮູ້ຈາກຊ່ຽວຊານໃນເລື່ອງເຫຼົ່ານັ້ນ.

**24** ເພາະເຫດນັ້ນ ຄຼິດສະຕຽນເຮົາຄວນຮຽນຮູ້ວິທະຍາສາດຕ່າງໆ ເພື່ອຈະຮູ້ຈາກຄວາມຊຳນານຂອງເຂົາໃນຫຼາຍໆເລື່ອງ ຄື: ມະນຸດສາດ, ສັງຄົມສາດ, ຈິດຕະວິທະຍາ, ປະຫວັດສາດ ໆລໆ.

ກ. ຖ້າຄຼິດສະຕຽນຄົນໃດອ່ານໄດ້ດີ ຈະເປັນຜົນປະໂຫຍດຢ່າງໃດໃນຄຼິດສະຕະຈັກ?

______________________________________________________________

ຂ. ການເຮັດບັນຊີເດ? ______________________________________________

ຄ. ວິຊາຄູ? _____________________________________________________

ງ. ວິຊາຊ່າງໄມ້? ________________________________________________

**25** ຖ້າຜູ້ນຳໃນຄຼິດສະຕະຈັກຮູ້ພະຄຳພີໄດ້ດີ ແຕ່ບໍ່ຮູ້ວິຊາຜູ້ນຳເພິ່ນຈະຮຽນຮູ້ວິຊາຜູ້ນຳຈາກໃສ? (ເລືອກ)

ກ. ພະຄຳຂອງພະເຈົ້າ.
ຂ. ຜູ້ຊ່ຽວຊານໃນການເປັນຜູ້ນຳ.
ຄ. ຊ່າງປູນ.



**26** ຜູ້ທີ່ຈະຮຽນວິຊາຊ່າງປູນ ບໍ່ຕ້ອງຮຽນມາຈາກພະຄຳພີເພາະພະຄຳພີບໍ່ກ່າວເລື່ອງການນັ້ນ. ຖ້າຮຽນຊ່າງປູນ ຈາກພະຄຳພີບໍ່ໄດ້ ຈະຮຽນຈາກໃສ? ______________________________

**27** ທ່ານເຄີຍຮຽນກ່ຽວກັບການວັດຜົນຢູ່ໃນທີ່ປະຊຸມ ຈຸດປະສົງຂອງການວັດຜົນນັ້ນຄືຫຍັງ? (ເລືອກ)

ກ. ເພື່ອໃຫ້ຜູ້ນຳອວດໄດ້.

ຂ. ເພື່ອໃຫ້ຜູ້ມາຮຽນມີໂອກາດຕິຕຽນຊຶ່ງກັນແລະກັນ.

ຄ. ເພື່ອຈະສາມາດຮຽນແລະສອນດີຂຶ້ນກວ່າແຕ່ກ່ອນ.

**28** ຜູ້ນຳໃນຄຼິດສະຕະຈັກຄວນທີ່ຈະປະເມີນຜົນງານຂອງເຂົາເປັນເທື່ອເປັນທີ ເພື່ອຈະເຮັດໃຫ້ການນັ້ນດີຂຶ້ນ. ຈະເອົາຫຍັງ ມາເປັນມາດຕະຖານວັດຜົນຫຼັກຄວາມເຊື່ອແລະການປະຕິບັດ?

_____________________________________________________________________

**29** ແມ່ນຜູ້ໃດຕໍ່ໄປນີ້ທີ່ໃຊ້ວິຊາວັດຜົນຢ່າງຖືກຕ້ອງ? (ເລືອກ)

ກ. ນັກເທດທີ່ເອົາໃຈໃສ່ຮຽນພະຄຳພີ ແລ້ວແຕ່ງບົດເທດຕາມທີ່ພະຄຳພີສອນໄວ້.

ຂ. ຜູ້ນຳໃນຄຼິດສະຕະຈັກທີ່ນັດເວລາໄວ້ ສະແຫວງຫານ້ຳພະໄທຂອງພະເຈົ້າດ້ວຍອົດອາຫານແລະອ້ອນວອນ.

ຄ. ຄູທີ່ສອບເສັງນັກສຶກສາຈຶ່ງຈະຮູ້ສ່ວນທີ່ເຂົາຮຽນບໍ່ພໍ ຕ້ອງສອນສ່ວນນັ້ນໃຫ້ເຂົາຮູ້ຕື່ມ.

ງ. ນັກເທດທີ່ມັກແຕ່ຟັງການປະຈົບປະແຈງຈາກຜູ້ຟັງດ້ວຍບໍ່ສັງເກດວ່າຜູ້ຟັງນັ້ນປະຕິບັດຕາມພະຄຳພີຫຼືບໍ່.

ຈ. ຜູ້ມາຮຽນ ສ.ອ.ນ. ຊຶ່ງຮຽນຄືນຢູ່ສະເໝີ ແລະທີ່ມັກປະເມີນຜົນວ່າໄດ້ດຳເນີນຊີວິດຄຼິດສະຕຽນຕາມພະຄຳພີຫຼືບໍ່

**30** ກ. ການວັດຜົນເລື່ອງຫຼັກຄວາມເຊື່ອແລະການດຳເນີນຊີວິດຄຼິດສະຕຽນຈະເອົາພະຄຳພີ ຫຼືຜູ້ຊ່ຽວຊານເປັນ ມາດຕະຖານ? ____________________________________

ຂ. ວິຊາແລະວິທີເປັນຜູ້ນຳຄຼິດສະຕະຈັກເດ? ______________________________

**31** ກ. ຖ້າມີຄົນມາສອນເລື່ອງລັກສະນະຂອງພະເຍຊູ ເຮົາຈະເອົາຫຍັງເປັນມາດຕະຖານປະເມີນຜົນຄຳສອນນັ້ນ? ____________________________________________

ຂ. ຖ້າຢາກຕື່ມຄວາມຮູ້ເລື່ອງວິຊາຄູ ຫຼືພູມສາດຈະເອົາຫຍັງມາເປັນມາດຕະຖານ? _______

**32** ຖ້າເຮົາຈະເພີ້ມຄວາມຮູ້ດ້ານຄຳສອນຂອງຜູ້ອື່ນກ່ຽວກັບຫຼັກຄວາມເຊື່ອ ຫຼືຖ້າເຮົາຈະເລືອກເອົາວິທີນຳຄຼິດສະຕະ ຈັກຢ່າງດີທີ່ສຸດເຮົາຄວນຮຽນດ້ວຍວິທີໃດ? ________________

*ຈຸດສຳຄັນໃນການຮຽນດ້ວຍ ສ.ອ.ນ. ນີ້ຄື:*

** ໃຫ້ຮູ້ໃນການໃຊ້ພະຄຳພີເປັນມາດຕະຖານວັດຜົນໃນຫຼັກຄວາມເຊື່ອແລະ ໃນຊີວິດຄຼິດສະຕຽນ.*

** ໃຫ້ສາມາດວັດຜົນໃນການຊຳນານເປັນຜູ້ນຳໃນຄຼິດສະຕະຈັກຈຶ່ງຈະເກີດດອກອອກຜົນ.*

ກ່ອນປະຊຸມເທື່ອໜ້າ ໃຫ້ທ່ານຮັບຜິດຈາລະນາໃນເລື່ອງຕໍ່ໄປນີ້ເພື່ອເປັນການຝຶກຫັດໃນການວັດຜົນ. ມີຊາຍໜຸ່ມໜຶ່ງທີ່ເປັນນັກເຕະບານ ລັກສະນະຂອງເພິ່ນມີຢູ່ຫຼາຍແງ່ຄື:

ກ. ຄວາມຊະນານດ້ານກິລາ.

ຂ. ສຸກຂະພາບຮ່າງກາຍ.

ຄ. ຄວາມສາມາດຮ່ວມກັບ ໝູ່ໃນທີມ.

ງ. ການປະພຶດໃນສະໜາມ.

ຈ. ຫຼັກຄວາມເຊື່ອດ້ານສາດສະໜາ.

ສ. ການດຳເນີນຊີວິດທົ່ວໄປ.

ໃນ 6 ປະການນັ້ນມີອັນໃດທີ່ຈະວັດຜົນດ້ວຍໃຊ້ພະຄຳພີເປັນມາດຕະຖານ? ອັນໃດທີ່ຈະວັດຜົນດ້ວຍເອົາຄວາມຄິດຜູ້ຊ່ຽວຊານມາເປັນມາດຕະຖານ. (ອາດຈະໃຊ້ທັງສອງໃນແງ່ດຽວກໍໄດ້)



*ໃຫ້ເສັງບົດເສັງທີ 9*

## ຄຳຕອບ:

**1** *ກ. ວັດຜົນ ຂ. ຄວາມຄິດ*

**2** *ດີຈາກຊົ່ວ (ຈິງຈາກຕົວະ)*

**3** *1. ຮູບ ກ 2. ຮູບ ຂ 3. ຮູບ ຄ 4. ຮູບ ງ 5. ຮູບ ຈ 6. ຮູບ ສ*

**4** *ຂ ແລະ ງ ຖືກ*

**5** *ກ. ໄຫວ້ວອນຍືດຍາວ ຂ. ວັດຜົນ*

**ຄຳຕອບ (ຕໍ່):**

**6** *ໂກງ... ມືດ*

**7** *ກ. ດີ... ຊົ່ວ (ຈິງ ແລະ ຕົວະ ກໍໄດ້) ຂ. ຄິດໂກງ... ມືດມົວ*

**8** *ພະຄຳພີ*

**9** *ສິ່ງແວດລ້ອມ*

**10** *ເອົາໄມ້ບັນທັດໃຊ້ທົດລອງ*

**11** *ກ. 2 ຄ. 4 ຂ. 3 ງ. 1*

**12** *ຄ ຖືກ*

**13** *ຕະກຽງ*

**14** *ພະຄຳພີ*

**15** *ກ. ຂໍ້ 18 (ກ່ອນເວລາເຂົາໄດ້ເປັນຄູ່ຜົວເມຍກັນ) ຂ. ຈະຖອນໝັ້ນເສຍ*

**16** *ກ. ຂໍ້ 18 ແລະ ຂໍ້ 20 ຂ. ຂໍ້ 23*

**17** *ກ. ບິດາ ຂ. ພົມມະຈະລີ... ພະວິນຍານບໍລິສຸດ*

**18** *ກ. ບໍ່ ຂ. ເອົາພະຄຳພີ*

**19** *ກ. ຖືກ ຂ. ພະຄຳພີ*

**20** *(ໃຫ້ແລກປ່ຽນຄວາມຄິດເຫັນໃນປະຊຸມຂ້າງໜ້າ)*

**21** *ກ ຄ ງ ຖືກ*

**22** *ກ ຂ ຈ ຖືກ*

**23** *ຄ ຖືກ*

**24** *ກ. ສອນໃຫ້ຜູ້ອື່ນອ່ານໄດ້ ອ່ານອອກສຽງໃນທີ່ປະຊຸມໄດ້*
*ຂ. ຮັບຜິດຊອບເປັນນາຍຄັງໄດ້*
*ຄ. ສອນພະຄຳພີໃຫ້ຜູ້ອື່ນ ສອນເດັກນ້ອຍກໍໄດ້*
*ງ. ສ້າງໜ່ວຍຄຼິດສະຕະຈັກໃໝ່ ຮັກສາຕຶກເກົ່າ*

**25** *ກ ແລະ ຂ ຖືກ*

**26** *ຮຽນຈາກຜູ້ຊ່ຽວຊານໃນດ້ານປູນ*

**27** *ຄ ຖືກ.*

**28** *ພະຄຳພີ.*

**29** *ກ ຂ ຄ ຈ ຖືກ.*

**30** *ກ. ພະຄຳພີຢ່າງດຽວ. ຂ. ພະຄຳພີ ແລະ ຜູ້ຊ່ຽວຊານ.*

**31** *ກ. ພະຄຳພີ. ຂ. ຜູ້ຊ່ຽວຊານ.*

**32** *ວັດຜົນ.*